ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ

ເຈົ້າແຂວງ

ເລກທີ 1105 /ຈຂ.ອຊ

ອຸດົມໄຊ, ລົງວັນທີ 15.9.2020

# ຂໍ້ຕົກລົງ

## ວ່າດ້ວຍການກຳນົດຫົວໜ່ວຍລາຄາທົດແທນຄ່າເສຍຫາຍ ໃຫ້ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນ້ຳຖ້ວມ ເທດສະບານເມືອງໄຊ ແຂວງອຸດົມໄຊ

- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບປັບປຸງ ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ມາດຕາ 19 ແລະ 20 ໝວດທີ VI ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ກົດໝາຍ ວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012;
- ອີງຕາມ ກົດໝາຍ ວ່າດ້ວຍທີ່ດິນ ສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ດຳລັດ ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຈາກໂຄງການພັດທະນາ ສະບັບເລກທີ 84/ລບ, ລົງວັນທີ 5 ເມສາ 2016;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການປະເມີນລາຄາທີ່ດິນໃນທົ່ວແຂວງອຸດົມໄຊ ສະບັບເລກທີ 506/ຈຂ.ອຊ, ລົງວັນທີ 19 ພຶດສະພາ 2020;
- ອີງຕາມ ມະຕິກອງປະຊຸມສະພາປະຊາຊົນແຂວງອຸດົມໄຊ ສະບັບເລກທີ 946/ສພຂ. ອຊ, ລົງວັນທີ 10 ກັນຍາ 2020.

## ເຈົ້າແຂວງອຸດົມໄຊ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະການ ກ່ຽວກັບການກຳນົດຫົວໜ່ວຍລາຄາທົດແທນຄ່າເສຍຫາຍຊັບສິນໃຫ້ຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການຄຸ້ມຄອງຄວາມສ່ຽງໄພພິບັດ ນ້ຳຖ້ວມ ເທດສະບານເມືອງໄຊ ແຂວງອຸດົມໄຊ ເພື່ອແນໃສ່ທົດແທນຄ່າເສຍຫາຍໃຫ້ສົມເຫດສົມຜົນສອດຄ່ອງກັບດຳລັດເລກທີ 84/ລບ, ລົງວັນທີ 5 ເມສາ 2016 ຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຈາກໂຄງການພັດທະນາ.

**ມາດຕາ 2 ການທົດແທນຄ່າເສຍຫາຍ**

ການທົດແທນຄ່າເສຍຫາຍ ແມ່ນການທົດແທນ ສໍາລັບທີ່ດິນ, ສິ່ງປຸກສ້າງ, ຜົນລະປູກ ແລະ ລາຍຮັບ ທີ່ໄດ້ຮັບຜົນກະທົບຈາກໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນໍ້າຖ້ວມ ເທດສະບານເມືອງໄຊ ດ້ວຍມູນຄ່າປ່ຽນແທນ ເປັນທີ່ດິນ, ວັດຖຸ ຫຼື ເປັນເງິນ.

**ມາດຕາ 3 ອະທິບາຍຄໍາສັບ**

**ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:**

1. ໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນໍ້າຖ້ວມ: ໝາຍເຖິງ ໂຄງການລົງທຶນຂອງລັດ ເຊິ່ງໄດ້ກໍານົດກິດຈະການ, ປະເພດ, ເຂດ, ພື້ນທີ່ຮອງຮັບ ແລະ ເງື່ອນໄຂຂອງການຫຼຸດຜ່ອນຜົນກະທົບຈາກໄພພິບັດນໍ້າຖ້ວມ ລວມທັງຂັ້ນຕອນ, ວິທີການ, ງົບປະມານ ແລະ ເວລາໃນການຈັດຕັ້ງປະຕິບັດ;
2. ຜູ້ໄດ້ຮັບຜົນກະທົບ: ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ຖືກຜົນກະທົບຈາກການພັດທະນາໂຄງການ ບໍ່ວ່າທາງກົງ ຫຼື ທາງອ້ອມ ເຊິ່ງໄດ້ຂຶ້ນບັນຊີຕາມຂໍ້ມູນທີ່ໄດ້ສໍາຫຼວດເກັບກໍາຕົວຈິງ ຫຼື ໄດ້ຮັບການຂຶ້ນທະບຽນໄວ້ໃນວັນຂຶ້ນທະບຽນສິດຂອງຜູ້ໄດ້ຮັບຜົນກະທົບ;
3. ການຈັດສັນຍົກຍ້າຍ, ຫຍັບຍ້າຍ: ໝາຍເຖິງ ການຍົກຍ້າຍ, ຫຍັບຍ້າຍ ສິ່ງປຸກສ້າງ, ທີ່ຢູ່ອາໄສ ຂອງຜູ້ ທີ່ຖືກຜົນກະທົບ ອອກຈາກເຂດພື້ນທີ່ການກໍ່ສ້າງ ຂອງໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນໍ້າຖ້ວມເທດສະບານເມືອງໄຊ ໄປອາໄສຢູ່ບ່ອນໃໝ່;
4. ປະເພດຊັບສິນ: ໝາຍເຖິງ ທີ່ດິນ, ສິ່ງປຸກສ້າງ, ຜົນລະປູກ ແລະ ອື່ນໆ ອີງຕາມການນໍາໃຊ້ຕົວຈິງ ໃນດິນຕອນນັ້ນ;
5. ລາຄາຫົວໜ່ວຍທົດແທນ: ໝາຍເຖິງ ການກໍານົດຕົວເລກເປັນເງິນ ຕໍ່ຫົວໜ່ວຍຄິດໄລ່ເພື່ອທົດແທນຄືນໃຫ້ຜູ້ທີ່ໄດ້ຮັບຜົນກະທົບ ຈາກການກໍ່ສ້າງບັນດາກິດຈະການ ຂອງໂຄງການຄຸ້ມຄອງໄພພິບັດນໍ້າຖ້ວມ ເທດສະບານເມືອງໄຊ;
6. ຊັ້ນຄົນໃນສັງຄົມ: ໝາຍເຖິງ ທຸກຊົນເຜົ່າ ຫຼື ບຸກຄົນ, ນິຕິບຸກຄົນ, ກຸ່ມຄົນ ແລະ ອົງການຈັດຕັ້ງໃດໜຶ່ງ ຢູ່ໃນສັງຄົມ ຊຶ່ງໄດ້ຮັບຜົນປະໂຫຍດ ແລະ ໄດ້ຮັບຜົນກະທົບຈາກໂຄງການ;
7. ເຄື່ອງໝາຍ: ໝາຍເຖິງ ລະຫັດທີ່ສະແດງເປັນອັກສອນ ແລະ ຕົວເລກ ຕາມທີ່ໄດ້ກໍານົດໄວ້ໃນຕາຕະລາງມີດັ່ງນີ້:

    ກ, ຂ, ຄ, ງ, ໝາຍເຖິງ ປະເພດຂອງຊັບສິນ;

    ກ1..., ຂ1..., ຄ1..., ງ1.... ໝາຍເຖິງ ປະເພດຍ່ອຍຂອງຊັບສິນ.

**ມາດຕາ 4 ນະໂຍບາຍຂອງແຂວງ**

1. ແຂວງຊຸກຍູ້ສົ່ງເສີມທຸກພາກສ່ວນ ບຸກຄົນ, ນິຕິບຸກຄົນ, ລວມໝູ່ ແລະ ອົງການຈັດຕັ້ງສັງຄົມ ປະກອບສ່ວນເຂົ້າໃນການຄຸ້ມຄອງປົກປັກຮັກສາ ແລະ ຊ່ວຍກັນພັດທະນາໂຄງການເປັນຕົ້ນແມ່ນ ການປະກອບສ່ວນຢ່າງຕັ້ງໜ້າ ດ້ານເຫື່ອແຮງ, ຈິດໃຈ, ຊັບສິນ ແລະ ວັດຖຸອື່ນໆ ໂດຍສອດຄ່ອງຕາມແນວທາງນະໂຍບາຍ ແລະ ກົດໝາຍລະບຽບ ທີ່ໄດ້ກໍານົດໄວ້;
2. ແຂວງຈະຮັບຮູ້ ຊັບສິນ, ທີ່ດິນ ແລະ ສິ່ງປຸກສ້າງ ທີ່ຖືກຕ້ອງຕາມລະບຽບ, ກົດໝາຍ ເພື່ອຄວາມເປັນລະບຽບຮຽບຮ້ອຍຕາມທິດ 4 ສໍ;
3. ແຂວງຈະປົກປ້ອງ ແລະ ຮັບປະກັນສິດຜົນປະໂຫຍດທີ່ຖືກຕ້ອງຕາມກົດໝາຍ ຂອງຜູ້ທີ່ໄດ້ຮັບຜົນກະທົບຢ່າງສະເໝີພາບ, ມີປະສິດທິຜົນ ແລະ ມີຄວາມສະຫງົບ ໂດຍຊົດເຊີຍເປັນເງິນ, ທີ່ດິນ, ຫຼື ວັດຖຸ.
4. ທີ່ດິນ ເຫຼືອຈາກເຂດສະຫງວນຂອງໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນໍ້າຖ້ວມ ເທດສະບານເມືອງໄຊ ແມ່ນໂຄງການເປັນຜູ້ຮັບຜິດຊອບອອກຄ່າໃຊ້ຈ່າຍໃນການດັດແກ້ ແລະ ອອກໃບຕາດິນໃໝ່ ໃຫ້ຜູ້ຖືກຜົນກະທົບ ໃນສ່ວນທີ່ເຫຼືອ ທີ່ດິນທີ່ຍັງເຫຼືອໜ້ອຍ ຫຼື ຫຼາຍ ຍັງເປັນສິດນໍາໃຊ້ທີ່ຖືກຕ້ອງຕາມກົດໝາຍ ຂອງຜູ້ທີ່ໄດ້ຮັບຜົນກະທົບ;

5. ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນ້ຳຖ້ວມ ເທດສະບານເມືອງໄຊ ຈະໄດ້ຮັບການຊົດເຊີຍກ່ອນ ເພື່ອໃຫ້ຜູ້ຖືກຜົນກະທົບມີເງື່ອນໄຂກະກຽມຍົກຍ້າຍ ແລະ ປຸກສ້າງທີ່ຢູ່ອາໄສໃໝ່ ໂດຍສະເພາະ ຜູ້ທຸກຍາກ, ດ້ອຍໂອກາດ ເປັນຕົ້ນແມ່ນ: ຜູ້ພິການ, ຜູ້ເສຍອົງຄະ, ຜູ້ສູງອາຍຸ, ເດັກນ້ອຍ, ແມ່ຮ້າງ , ແມ່ໝ້າຍ, ກຸ່ມຜູ້ທຸກຍາກ ແລະ ຜູ້ທີ່ອາໄສຢູ່ດິນລັດ ທີ່ໄດ້ຮັບຜົນກະທົບຈາກໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນ້ຳຖ້ວມ ເທດສະບານເມືອງໄຊ ຈະໄດ້ເອົາໃຈໃສ່ພິເສດເພື່ອຟື້ນຟູຊີວິດການເປັນຢູ່ ໃຫ້ຫຼຸດພົ້ນຈາກຄວາມທຸກຍາກ ແລະ ໃຫ້ໄດ້ສະພາບດີຂຶ້ນກ່ອນເກົ່າ.

**ມາດຕາ 5 ຫຼັກການກຳນົດຫົວໜ່ວຍລາຄາ**

ຫຼັກການກຳນົດຫົວໜ່ວຍລາຄາ ໂດຍປະຕິບັດຕາມຫຼັກການດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ, ກໍຄືແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງອາງອອກ;
2. ສອດຄ່ອງກັບເງື່ອນໄຂ ແລະ ສະພາບຄວາມເປັນຈິງ ຮັບປະກັນຄວາມໂປ່ງໃສ, ເປີດເຜີຍ, ມີຄວາມຍຸຕິທຳ ແລະ ສາມາດກວດສອບໄດ້;
3. ມີການປຶກສາຫາລື, ການມີສ່ວນຮ່ວມຂອງປະຊາຊົນ, ຊັ້ນຄົນໃນສັງຄົມ, ການຈັດຕັ້ງລັດ ແລະ ມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ໃຊ້ສະເພາະແຕ່ຂອບເຂດ ຈຳນວນ 16 ບ້ານ ທີ່ຖືກໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນ້ຳຖ້ວມ ເທດສະບານເມືອງໄຊ ແຂວງອຸດົມໄຊ.

## ໝວດທີ 2
## ການກຳນົດປະເພດຊັບສິນ ແລະ ການຄິດໄລ່ຫົວໜ່ວຍລາຄາ ທົດແທນຄ່າເສຍຫາຍ ໃຫ້ຜູ້ໄດ້ຮັບຜົນກະທົບ

**ມາດຕາ 7 ການກຳນົດປະເພດຊັບສິນ**

ການກຳນົດປະເພດຊັບສິນ ໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການຄຸ້ມຄອງຄວາມສ່ຽງໄພພິບັດ ນ້ຳຖ້ວມ ເທດສະບານເມືອງໄຊ ແຂວງອຸດົມໄຊ ໄດ້ຈັດແບ່ງອອກເປັນ 4 ປະເພດຄື: (ກ) ດິນກະສິກຳ, (ຂ) ດິນປຸກສ້າງ , (ຄ) ສິ່ງປຸກສ້າງ ແລະ (ງ) ຕົ້ນໄມ້ ແລະ ພືນລະປຸກ.

**ມາດຕາ 8 ຫຼັກການຄິດໄລ່ຫົວໜ່ວຍລາຄາແຕ່ລະປະເພດ**

**ກ. ປະເພດດິນກະສິກຳ**

ປະເພດດິນກະສິກຳ ມີພຽງແຕ່ 2 ປະເພດຄື: ດິນນາ ແລະ ດິນສວນ

ກ1 ດິນນາ: <u>ຄ່າທົດແທນ = (ເນື້ອທີ່ດິນສູນເສຍ x ລາຄາດິນແຕ່ລະເຂດ) + ຄ່າທົດແທນຜົນຜະລິດ</u>

- ຄ່າທົດແທນຜົນຜະລິດ = ສະມັດຕະພາບຜົນຜະລິດ (ໂຕນ/ປີ/ເຮັກຕາ) x ເນື້ອທີ່ສູນເສຍ x ລາຄາເຂົ້າເປືອກທ້ອງຕະຫຼາດ (ກີບ/ໂຕນ) x 5 (ປີ), ການຄິດໄລ່ແມ່ນໄດ້ຖືເອົາສະມັດຕະພາບ ແລະ ລາຄາໃນທ້ອງຕະຫຼາດເປັນພື້ນຖານ.

ກ2 ດິນສວນ: <u>ຄ່າທົດແທນ = (ເນື້ອທີ່ດິນທີ່ສູນເສຍ x ລາຄາດິນແຕ່ລະເຂດ) + ຄ່າທົດແທນຕົ້ນໄມ້, ພືນລະປຸກ.</u>

**ຂ. ປະເພດດິນປຸກສ້າງ**

ປະເພດດິນປຸກສ້າງ: ຄ່າທົດແທນ = (ເນື້ອທີ່ທີ່ສູນເສຍ x ລາຄາດິນແຕ່ລະເຂດ) + ຄ່າທົດແທນສິ່ງປຸກສ້າງ (ຖ້າມີສິ່ງປຸກສ້າງ).

**ຄ. ປະເພດສິ່ງປຸກສ້າງ**

ສິ່ງປຸກສ້າງທີ່ຖືກຜົນກະທົບ ຈະຄິດໄລ່ເປັນເນື້ອທີ່, ແຕ່ບໍ່ໄດ້ຄິດໄລ່ມູນຄ່າລຸ້ຍຫ້ຽນເຂົ້ານຳ.

ປະເພດສິ່ງປຸກສ້າງ: ແມ່ນເອົາຕາມການຄິດໄລ່ ຂອງຂະແໜງເຄຫາ ແລະ ຜັງເມືອງ, ພະແນກ ຍທຂ ກ່ຽວກັບການຈັດໝວດ, ກຳນົດຫົວໜ່ວຍລາຄາປະເພດສິ່ງກໍ່ສ້າງ.

**ງ. ປະເພດຕົ້ນໄມ້ ແລະ ຜົນລະປູກ**

ປະເພດຕົ້ນໄມ້ຄິດໄລ່ຕາມອາຍຸ ເຊິ່ງປະກອບດ້ວຍ ຕົ້ນໄມ້ອຸດສະຫະກຳ, ຕົ້ນໄມ້ໃຫ້ໝາກ, ຜົນລະປູກ ແລະ ຕົ້ນໄມ້ປະດັບ.

ງ1. ການຄິດໄລ່ປະເພດຕົ້ນໄມ້: ຄ່າທົດແທນ = (ຄ່າບຸກເບີກພື້ນທີ່ + ເບ້ຍໄມ້) + (ຄ່າບົວລະບັດຮັກສາ x ຈຳນວນປີທີ່ບົວລະບັດຮັກສາ).

ງ2. ຜົນລະປູກ (ພືດລົ້ມລຸກ): ຈະບໍ່ມີການທົດແທນ ເພາະເວລາກ່ອນຈະລົງມືດຳເນີນການກໍ່ສ້າງ ທາງໂຄງການ ແລະ ບໍລິສັດຜູ້ຮັບເໝົາຈະໄດ້ແຈ້ງໃຫ້ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຊາບກ່ອນຢ່າງໜ້ອຍ 6 ເດືອນ;

ກໍລະນີບໍ່ໄດ້ແຈ້ງ, ໂຄງການຈຳເປັນຕ້ອງເຂົ້າໄປນຳໃຊ້ພື້ນທີ່ ໃນເວລາທີ່ພືດຍັງບໍ່ທັນໄດ້ເກັບກ່ຽວ ໂຄງການຕ້ອງຈ່າຍຄ່າທົດແທນພືດ ທີ່ເສຍຫາຍຕາມການປະເມີນຂອງຄະນະກຳມະການ.

## ໝວດທີ 3
## ການກຳນົດຫົວໜ່ວຍລາຄາ

**ມາດຕາ 9 ການກຳນົດຫົວໜ່ວຍລາຄາດິນກະສິກຳ**

| ລ/ດ | ເນື້ອໃນລາຍການ | | | ຫົວໜ່ວຍ | ລາຄາທີ່ດິນພ້ອມທັງຜົນຜະລິດ (ກີບ) | ໝາຍເຫດ |
|---|---|---|---|---|---|---|
| **ກ** | **ປະເພດດິນກະສິກຳ** | | | | | |
| ກ1 | ດິນນາ | | | | | |
| | | ກ1 | ບ້ານ ຫ້ວຍຊຸມ, ນາສ້າວ, ນາໜີ, ນາເລົາ, ນາຫວານນ້ອຍ, ໂຮມສຸກ, ຖ້ຳ, ວັງໄຮ, ປ່າສັກ, ເຈງ, ມອນໄຕ້, ລ້ອງກຳເດືອ, ໜອງແມງດາ, ດອນແກ້ວ, ວຽງສາ ແລະ ຫຼັກ 4. | $ມ^2$ | 83,000 | |
| ກ2 | ດິນສວນ | | | | | |
| | | ກ2.1 | ບ້ານ ຫ້ວຍຊຸມ, ນາສ້າວ, ນາໜີ, ນາເລົາ, ນາຫວານນ້ອຍ, ໂຮມສຸກ, ຖ້ຳ, ວັງໄຮ, ປ່າສັກ, ເຈງ, ມອນໄຕ້, ລ້ອງກຳເດືອ, ໜອງແມງດາ, ດອນແກ້ວ, ວຽງສາ ແລະ ຫຼັກ 4 | $ມ^2$ | 36,000 | |

**ມາດຕາ 10 ການກຳນົດຫົວໜ່ວຍລາຄາທີ່ດິນປຸກສ້າງ**

| ລ/ດ | ເນື້ອໃນລາຍການ | | | ຫົວໜ່ວຍ | ລາຄາທີ່ດິນພ້ອມທັງຜົນຜະລິດ (ກີບ) | ໝາຍເຫດ |
|---|---|---|---|---|---|---|
| **ຂ** | **ປະເພດດິນປຸກສ້າງ** | | | | | |
| | | ຂ.1 | ບ້ານ ຫ້ວຍຊຸມ, ນາສ້າວ, ນາໜີ, ນາເລົາ, ນາຫວານນ້ອຍ, ໂຮມສຸກ, ຖິ່ນ, ວັງໄຮ, ປ່າສັກ, ເຈງ, ມອນໄຕ້, ລ້ອງກຳເດືອ, ໜອງແມງດາ, ດອນແກ້ວ, ວຽງສາ ແລະ ຫຼັກ 4. | ມ$^2$ | 600,000 | |

**ມາດຕາ 11 ການກຳນົດຫົວໜ່ວຍລາຄາປະເພດສິ່ງປຸກສ້າງ**

| ລ/ດ | ເນື້ອໃນລາຍການ | | | ຫົວໜ່ວຍ | ລາຄາທີ່ດິນພ້ອມທັງຜົນຜະລິດ (ກີບ) | ໝາຍເຫດ |
|---|---|---|---|---|---|---|
| **ຄ** | **ປະເພດສິ່ງປຸກສ້າງ** | | | | | |
| | ຄ1 | ເຮືອນຕູບ | | | | |
| | | ຄ1.1 | ໂຄງສ້າງໄມ້ກົມ, ຝາໄມ້ປ່ອງ, ມຸງຫຍ້າ ຫຼື ມຸງຝ້າ | ມ$^2$ | 390,000 | |
| | | ຄ1.2 | ໂຄງສ້າງໄມ້ກົມ, ຝາໄມ້ປ່ອງ, ມຸງສັງກະສີ | ມ$^2$ | 420,000 | |
| | | ຄ1.3 | ໂຄງສ້າງໄມ້ກົມ, ຝາໄມ້ປ່ອງ, ມຸງກະເບື້ອງ | ມ$^2$ | 456,000 | |
| | | ຄ1.4 | ໂຄງສ້າງໄມ້ລ່ຽມ, ຝາແປ້ນ, ມຸງຫຍ້າ ຫຼື ມຸງຝ້າ | ມ$^2$ | 433,000 | |
| | | ຄ1.5 | ໂຄງສ້າງໄມ້ລ່ຽມ, ຝາແປ້ນ, ມຸງສັງກະສີ | ມ$^2$ | 500,000 | |
| | | ຄ1.6 | ໂຄງສ້າງໄມ້ລ່ຽມ, ຝາແປ້ນ, ມຸງກະເບື້ອງ | ມ$^2$ | 590,000 | |
| | ຄ2 | ເຮືອນຊັ້ນດຽວ | | | | |
| | | ຄ2.1 | ໂຄງສ້າງໄມ້, ຝາແປ້ນ, ມຸງຫຍ້າ | ມ$^2$ | 816,000 | |
| | | ຄ2.2 | ໂຄງສ້າງໄມ້, ຝາແປ້ນ, ມຸງສັງກະສີ | ມ$^2$ | 1,020,000 | |
| | | ຄ2.3 | ໂຄງສ້າງໄມ້, ຝາແປ້ນ, ມຸງກະເບື້ອງ | ມ$^2$ | 1,044,000 | |
| | | ຄ2.4 | ໂຄງສ້າງໄມ້, ຝາກໍ່ດິນຈີ່, ມຸງສັງກະສີ | ມ$^2$ | 1,020,000 | |
| | | ຄ2.5 | ໂຄງສ້າງໄມ້, ຝາກໍ່ດິນຈີ່, ມຸງກະເບື້ອງ | ມ$^2$ | 2,640,000 | |
| | | ຄ2.6 | ໂຄງສ້າງເບຕົງ, ຝາກໍ່ດິນບ໋ອກ, ມຸງສັງກະສີ | ມ$^2$ | 2,700,000 | |
| | | ຄ2.7 | ໂຄງສ້າງເບຕົງ, ຝາກໍ່ດິນບ໋ອກ, ມຸງກະເບື້ອງ | ມ$^2$ | 3,211,200 | |
| | | ຄ2.8 | ໂຄງສ້າງເບຕົງ, ຝາກໍ່ດິນຈີ່, ມຸງສັງກະສີ | ມ$^2$ | 3,214,000 | |
| | | ຄ2.9 | ໂຄງສ້າງເບຕົງ, ຝາກໍ່ດິນຈີ່, ມຸງກະເບື້ອງ | ມ$^2$ | 3,840,000 | |
| | | ຄ2.10 | ໂຄງສ້າງເບຕົງ, ຝາກໍ່ດິນຈີ່, ມຸງອາລູຊິ້ງ | ມ$^2$ | 3,500,000 | |
| | | ຄ2.11 | ໂຄງສ້າງເບຕົງ, ຝາກໍ່ດິນຈີ່, ມຸງຊີແພັກ | ມ$^2$ | 4,200,000 | |
| | ຄ3 | ເຮືອນ 2 ຊັ້ນ | | | | |
| | | ຄ3.1 | ເຮືອນຮ້ານ, ປູໄມ້ແປ້ນ, ມຸງສັງກະສີ | ມ$^2$ | 1,453,000 | |
| | | ຄ3.2 | ເຮືອນໄມ້ສອງຊັ້ນ, ມຸງສັງກະສີ | ມ$^2$ | 1,617,000 | |
| | | ຄ3.3 | ເຮືອນໄມ້ສອງຊັ້ນ, ມຸງກະເບື້ອງ | ມ$^2$ | 1,965,000 | |
| | | ຄ3.4 | ເຮືອນໄມ້ສອງຊັ້ນ, ມຸງຊີແພັກ | ມ$^2$ | 2,190,000 | |

| | | | | | | |
|---|---|---|---|---|---|---|
| | | ຄ3.5 | ເຮືອນລຸ່ມກໍ່, ເທິງໄມ້, ມຸງສັງກະສີ | $ม^2$ | 1,700,000 | |
| | | ຄ3.6 | ເຮືອນລຸ່ມກໍ່, ເທິງໄມ້, ມຸງກະເບື້ອງ | $ม^2$ | 2,860,000 | |
| | | ຄ3.7 | ເຮືອນລຸ່ມກໍ່, ເທິງໄມ້, ມຸງຊີແພັກ | $ม^2$ | 3,160,000 | |
| | | ຄ3.8 | ເຮືອນກໍ່ 2 ຊັ້ນ, ມຸງສັງກະສີ | $ม^2$ | 2,680,000 | |
| | | ຄ3.9 | ເຮືອນກໍ່ 2 ຊັ້ນ, ມຸງກະເບື້ອງ | $ม^2$ | 3,940,000 | |
| | | ຄ3.10 | ເຮືອນກໍ່ 2 ຊັ້ນ, ມຸງຊີແພັກ | $ม^2$ | 4,340,000 | |
| | | ຄ3.11 | ເຮືອນລາວແບບປະຍຸກ | $ม^2$ | 4,700,000 | |
| | ຄ4 | ເຮືອນຫ້ອງແຖວ | | | | |
| | | ຄ4.1 | ເຮືອນໄມ້ຊັ້ນດຽວ, ມຸງສັງກະສີ | $ม^2$ | 1,020,000 | |
| | | ຄ4.2 | ເຮືອນໄມ້ຊັ້ນດຽວ, ມຸງກະເບື້ອງ | $ม^2$ | 1,200,000 | |
| | | ຄ4.3 | ເຮືອນກໍ່ຊັ້ນດຽວ, ມຸງສັງກະສີ | $ม^2$ | 1,300,000 | |
| | | ຄ4.4 | ເຮືອນກໍ່ຊັ້ນດຽວ, ມຸງກະເບື້ອງ | $ม^2$ | 2,280,000 | |
| | | ຄ4.5 | ເຮືອນກໍ່ຊັ້ນດຽວ, ມຸງຊີແພັກ | $ม^2$ | 2,100,000 | |
| | ຄ5 | ເຮືອນຄົວ, ເທີບເຮືອນ, ຊານເຮືອນ, ບ່ອນຈອດລົດ, ຖຽງນາ, ຮ້ານເຟືອງ, ຄອກສັດ, ຮ້ານຂາຍເຄື່ອງ, ເຮືອນໂປ້ມນ້ຳ | | | | |
| | | ຄ5.1 | ໂຄງໄມ້ກົມ, ມຸງສັງກະສີ | $ม^2$ | 300,000 | |
| | | ຄ5.2 | ໂຄງໄມ້ລ່ຽມ, ເທພື້ນເບຕົງ, ມຸງສັງກະສີ | $ม^2$ | 360,000 | |
| | | ຄ5.3 | ໂຄງໄມ້ລ່ຽມ, ເທພື້ນເບຕົງ, ມຸງກະເບື້ອງ | $ม^2$ | 384,000 | |
| | | ຄ5.4 | ໂຄງເຫຼັກ, ເທພື້ນເບຕົງ, ມຸງກະເບື້ອງ | $ม^2$ | 420,000 | |
| | | ຄ5.5 | ໂຄງເຫຼັກ, ເທພື້ນເບຕົງ, ມຸງອາລູຊິງ | $ม^2$ | 384,000 | |
| | ຄ6 | ຫ້ອງນ້ຳ | | | | |
| | | ຄ6.1 | ຫ້ອງນ້ຳວິດຊຶມທຳມະດາ | $ม^2$ | 420,000 | |
| | | ຄ6.2 | ກໍ່ດ້ວຍດິນຈີ່, ມຸງສັງກະສີ | $ม^2$ | 700,000 | |
| | | ຄ6.3 | ຝາດິນຈີ່, ຕິດກາໂລ, ມຸງກະເບື້ອງ | $ม^2$ | 1,000,000 | |
| | ຄ7 | ເລົ້າເຂົ້າ | | | | |
| | | ຄ7.1 | ໂຄງສ້າງໄມ້ກົມ, ຝາໄມ້ປ່ອງ, ມຸງຫຍ້າ | $ม^2$ | 160,000 | |
| | | ຄ7.2 | ໂຄງສ້າງໄມ້ລ່ຽມ, ຝາໄມ້ແປ້ນ, ມຸງສັງກະສີ | $ม^2$ | 400,000 | |
| | | ຄ7.3 | ໂຄງສ້າງໄມ້ລ່ຽມ, ຝາໄມ້ແປ້ນ, ມຸງກະເບື້ອງ | $ม^2$ | 450,000 | |
| | ຄ8 | ສາງເຄື່ອງ | | | | |
| | | ຄ8.1 | ໂຄງສ້າງໄມ້, ມຸງສັງກະສີ | $ม^2$ | 576,000 | |
| | | ຄ8.2 | ໂຄງສ້າງເຫຼັກ, ມຸງອາລູຊິງ | $ม^2$ | 1,140,000 | |
| | | ຄ8.3 | ກໍ່ດ້ວຍດິນຈີ່, ມຸງສັງກະສີ | $ม^2$ | 1,020,000 | |
| | | ຄ8.4 | ກໍ່ດ້ວຍດິນຈີ່, ມຸງກະເບື້ອງ | $ม^2$ | 1,800,000 | |
| | ຄ9 | ຟາມ | | | | |
| | | ຄ9.1 | ໂຄງສ້າງໄມ້, ມຸງສັງກະສີ | $ม^2$ | 82,800 | |
| | | ຄ9.2 | ໂຄງສ້າງເຫຼັກ, ມຸງສັງກະສີ | $ม^2$ | 228,000 | |
| | | ຄ9.3 | ໂຄງສ້າງເຫຼັກ, ມຸງກະເບື້ອງ | $ม^2$ | 504,000 | |
| | | ຄ9.4 | ໂຄງສ້າງເຫຼັກ, ມຸງອາລູຊິງ | $ม^2$ | 420,000 | |
| | ຄ10 | ໂຮງເລື່ອຍ, ໂຮງສີເຂົ້າ | | | | |

| | | | | | | |
|---|---|---|---|---|---|---|
| | | ຄ10.1 | ໂຄງຮ່າງໄມ້, ມຸງສັງກະສີ | $ມ^2$ | 320,000 | |
| | | ຄ10.2 | ໂຄງຮ່າງໄມ້, ມຸງກະເບື້ອງ | $ມ^2$ | 500,000 | |
| | | ຄ10.3 | ໂຄງຮ່າງເຫຼັກ, ມຸງກະເບື້ອງ | $ມ^2$ | 1,000,000 | |
| | | ຄ10.4 | ໂຄງຮ່າງເຫຼັກ, ມຸງອາລູຊິງ | $ມ^2$ | 800,000 | |
| | ຄ11 | ຮົ້ວ | | | | |
| | | ຄ11.1 | ຮົ້ວກໍ່ເຕັມ | ມຍ | 300,000 | |
| | | ຄ11.2 | ຮົ້ວກໍ່ປະສົມ | ມຍ | 240,000 | |
| | | ຄ11.3 | ຮົ້ວເສົາເບຕົງ ຕາໜ່າງເຫຼັກ | ຫຼັກ | 156,000 | |
| | | ຄ11.4 | ຫຼັກຮົ້ວໄມ້ແກນລ້ອມ | ຫຼັກ | 20,000 | |
| | | ຄ11.5 | ໜາມໜາກຈັບ | ໂຄ້ງ | 120,000 | |
| | | ຄ11.6 | ຕາໜ່າງເຫຼັກ | ມຍ | 20,400 | |
| | | ຄ11.7 | ກະແຕະໄມ້ | ມຍ | 15,000 | |
| | | ຄ11.8 | ຮົ້ວແບບທັນສະໄໝ (ຮົ້ວຫູ) | ມຍ | 1,500,000 | |
| | ຄ12 | ກັນເຈື່ອນ | | | | |
| | | ຄ12.1 | ກະຕ່າຫີນ | $ມ^3$ | 1,800,000 | |
| | | ຄ12.2 | ກໍ່ກັນເຈື່ອນ | $ມ^3$ | 2,500,000 | |

**ມາດຕາ 12 ການກຳນົດຫົວໜ່ວຍລາຄາປະເພດຕົ້ນໄມ້ ແລະ ພືດລະປູກ**

| ລ/ດ | ເນື້ອໃນລາຍການ | | | ຫົວໜ່ວຍ | ລາຄາທີ່ດິນພ້ອມທັງຜົນຜະລິດ (ກີບ) | ໝາຍເຫດ |
|---|---|---|---|---|---|---|
| **ງ** | **ປະເພດຕົ້ນໄມ້ ແລະ ພືດລະປູກ** | | | | | |
| | ງ1 | ຕົ້ນໄມ້ອຸດສາຫະກຳ | | | | |
| | | ງ1.1 | ໄມ້ສັກ 1 ປີ | ຕົ້ນ | 12,000 | |
| | | ງ1.2 | ໄມ້ສັກ 2 ປີ | ຕົ້ນ | 18,000 | |
| | | ງ1.3 | ໄມ້ສັກ 3 ປີ | ຕົ້ນ | 24,000 | |
| | | ງ1.4 | ໄມ້ສັກ 4 ປີ | ຕົ້ນ | 30,000 | |
| | | ງ1.5 | ໄມ້ສັກ 5 ປີ | ຕົ້ນ | 36,000 | |
| | | ງ1.6 | ໄມ້ສັກ 6 ປີ | ຕົ້ນ | 42,000 | |
| | | ງ1.7 | ໄມ້ສັກ 7-12 ປີ | ຕົ້ນ | 72,000 | |
| | | ງ1.8 | ໄມ້ສັກ 13 ປີ ຂຶ້ນໄປ | ຕົ້ນ | 120,000 | |
| | | ງ1.9 | ຢາງພາລາ 1 ປີ | ຕົ້ນ | 30,000 | |
| | | ງ1.10 | ຢາງພາລາ 2 ປີ | ຕົ້ນ | 42,000 | |
| | | ງ1.11 | ຢາງພາລາ 3 ປີ | ຕົ້ນ | 54,000 | |
| | | ງ1.12 | ຢາງພາລາ 4 ປີ | ຕົ້ນ | 66,000 | |
| | | ງ1.13 | ຢາງພາລາ 5 ປີ | ຕົ້ນ | 78,000 | |
| | | ງ1.14 | ຢາງພາລາ 6 ປີ | ຕົ້ນ | 150,000 | |
| | | ງ1.15 | ຢາງພາລາ 7 ປີ ຂຶ້ນໄປ | ຕົ້ນ | 225,000 | |
| | | ງ1.16 | ໄມ້ດູ່, ໄມ້ຄ່າ, ຂະຍຸງ, ດູ່ລາຍ 1 ປີ | ຕົ້ນ | 18,000 | |

| | | | | | | |
|---|---|---|---|---|---|---|
| | | ງ1.17 | ໄມ້ດູ່, ໄມ້ຄ່າ, ຂະຍຸງ, ດູ່ລາຍ 2 ປີ | ຕົ້ນ | 24,000 | |
| | | ງ1.18 | ໄມ້ດູ່, ໄມ້ຄ່າ, ຂະຍຸງ, ດູ່ລາຍ 3 ປີ | ຕົ້ນ | 30,000 | |
| | | ງ1.19 | ໄມ້ດູ່, ໄມ້ຄ່າ, ຂະຍຸງ, ດູ່ລາຍ 4 ປີ | ຕົ້ນ | 36,000 | |
| | | ງ1.20 | ໄມ້ດູ່, ໄມ້ຄ່າ, ຂະຍຸງ, ດູ່ລາຍ 5 ປີ | ຕົ້ນ | 48,000 | |
| | | ງ1.21 | ໄມ້ດູ່, ໄມ້ຄ່າ, ຂະຍຸງ, ດູ່ລາຍ 6 ປີ | ຕົ້ນ | 60,000 | |
| | | ງ1.22 | ໄມ້ດູ່, ໄມ້ຄ່າ, ຂະຍຸງ, ດູ່ລາຍ 7-12 ປີ | ຕົ້ນ | 72,000 | |
| | | ງ1.23 | ໄມ້ດູ່, ໄມ້ຄ່າ, ຂະຍຸງ, ດູ່ລາຍ 13 ປີ ຂຶ້ນໄປ | ຕົ້ນ | 120,000 | |
| | ງ2 | ຕົ້ນໄມ້ໃຫ້ໝາກ | | | | |
| | | ງ2.1 | ໝາກພຸກ 5 ປີ ລົງມາ | ຕົ້ນ | 54,000 | |
| | | ງ2.2 | ໝາກພຸກ 5 ປີ ຂຶ້ນໄປ | ຕົ້ນ | 120,000 | |
| | | ງ2.3 | ໝາກພ້າວ 5 ປີ ລົງມາ | ຕົ້ນ | 96,000 | |
| | | ງ2.4 | ໝາກພ້າວ 5 ປີ ຂຶ້ນໄປ | ຕົ້ນ | 180,000 | |
| | | ງ2.5 | ໝາກລອດ, ໝາກຜາງ, ໝາກຜູ 5 ປີ ລົງມາ | ຕົ້ນ | 36,000 | |
| | | ງ2.6 | ໝາກລອດ, ໝາກຜາງ, ໝາກຜູ 5 ປີ ຂຶ້ນໄປ | ຕົ້ນ | 102,000 | |
| | | ງ2.7 | ໝາກນາວ 5 ປີ ລົງມາ | ຕົ້ນ | 60,000 | |
| | | ງ2.8 | ໝາກນາວ 5 ປີ ຂຶ້ນໄປ | ຕົ້ນ | 120,000 | |
| | | ງ2.9 | ໝາກສີດາ 5 ປີ ລົງມາ | ຕົ້ນ | 36,000 | |
| | | ງ2.10 | ໝາກສີດາ 5 ປີ ຂຶ້ນໄປ | ຕົ້ນ | 72,000 | |
| | | ງ2.11 | ລິ້ນຈີ່, ເງາະ, ມັງກອນ, ຖົ່ວລຽນ 5 ປີ ລົງມາ | ຕົ້ນ | 60,000 | |
| | | ງ2.12 | ລິ້ນຈີ່, ເງາະ, ມັງກອນ, ຖົ່ວລຽນ 5 ປີ ຂຶ້ນໄປ | ຕົ້ນ | 120,000 | |
| | | ງ2.13 | ໝາກມີ້ 5 ປີ ລົງມາ | ຕົ້ນ | 60,000 | |
| | | ງ2.14 | ໝາກມີ້ 5 ປີ ຂຶ້ນໄປ | ຕົ້ນ | 120,000 | |
| | | ງ2.15 | ໝາກກະທັນ 5 ປີ ລົງມາ | ຕົ້ນ | 60,000 | |
| | | ງ2.16 | ໝາກກະທັນ 5 ປີ ຂຶ້ນໄປ | ຕົ້ນ | 120,000 | |
| | | ງ2.17 | ໝາກມ່ວງ 5 ປີ ລົງມາ | ຕົ້ນ | 60,000 | |
| | | ງ2.18 | ໝາກມ່ວງ 5 ປີ ຂຶ້ນໄປ | ຕົ້ນ | 120,000 | |
| | | ງ2.19 | ໝາກຂາມ 5 ປີ ລົງມາ | ຕົ້ນ | 60,000 | |
| | | ງ2.20 | ໝາກຂາມ 5 ປີ ຂຶ້ນໄປ | ຕົ້ນ | 120,000 | |
| | | ງ2.21 | ໝາກກ້ຽງ 5 ປີ ລົງມາ | ຕົ້ນ | 36,000 | |
| | | ງ2.22 | ໝາກກ້ຽງ 5 ປີ ຂຶ້ນໄປ | ຕົ້ນ | 120,000 | |
| | | ງ2.23 | ໝາກລຳໄຍ, ໝາກລະມຸດ 5 ປີ ລົງມາ | ຕົ້ນ | 60,000 | |
| | | ງ2.24 | ໝາກລຳໄຍ, ໝາກລະມຸດ 5 ປີ ຂຶ້ນໄປ | ຕົ້ນ | 120,000 | |
| | | ງ2.25 | ໝາກຄໍ້ 5 ປີ ລົງມາ | ຕົ້ນ | 36,000 | |
| | | ງ2.26 | ໝາກຄໍ້ 5 ປີ ຂຶ້ນໄປ | ຕົ້ນ | 96,000 | |
| | | ງ2.27 | ໝາກຄາຍ 5 ປີ ລົງມາ | ຕົ້ນ | 36,000 | |
| | | ງ2.28 | ໝາກຄາຍ 5 ປີ ຂຶ້ນໄປ | ຕົ້ນ | 108,000 | |
| | | ງ2.29 | ໝາກມອນໄຂ່, ໝາກຍົມ, ໝາກເຟືອງ 5 ປີ ລົງມາ | ຕົ້ນ | 42,000 | |
| | | ງ2.30 | ໝາກມອນໄຂ່, ໝາກຍົມ, ໝາກເຟືອງ 5 ປີ ຂຶ້ນໄປ | ຕົ້ນ | 102,000 | |

| | | | | | | |
|---|---|---|---|---|---|---|
| | | ງ2.31 | ໝາກຫຸ່ງ 5 ປີ ລົງມາ | ຕົ້ນ | 24,000 | |
| | | ງ2.32 | ໝາກຫຸ່ງ 5 ປີ ຂຶ້ນໄປ | ຕົ້ນ | 60,000 | |
| | | ງ2.33 | ໝາກຂຽບ 5 ປີ ລົງມາ | ຕົ້ນ | 24,000 | |
| | | ງ2.34 | ໝາກຂຽບ 5 ປີ ຂຶ້ນໄປ | ຕົ້ນ | 96,000 | |
| | | ງ2.35 | ໝາກຕາກົບ 5 ປີ ລົງມາ | ຕົ້ນ | 36,000 | |
| | | ງ2.36 | ໝາກຕາກົບ 5 ປີ ຂຶ້ນໄປ | ຕົ້ນ | 60,000 | |
| | | ງ2.37 | ໝາກນ້ຳນົມ 5 ປີ ລົງມາ | ຕົ້ນ | 60,000 | |
| | | ງ2.38 | ໝາກນ້ຳນົມ 5 ປີ ຂຶ້ນໄປ | ຕົ້ນ | 120,000 | |
| | | ງ2.39 | ໝາກໝັ້ນ 5 ປີ ລົງມາ | ຕົ້ນ | 60,000 | |
| | | ງ2.40 | ໝາກໝັ້ນ 5 ປີ ຂຶ້ນໄປ | ຕົ້ນ | 120,000 | |
| | | ງ2.41 | ໝາກອາໂວກາໂດ 5 ປີ ລົງມາ | ຕົ້ນ | 84,000 | |
| | | ງ2.42 | ໝາກອາໂວກາໂດ 5 ປີ ຂຶ້ນໄປ | ຕົ້ນ | 180,000 | |
| | | ງ2.43 | ໝາກຂີ້ຫູດ 5 ປີ ລົງມາ | ຕົ້ນ | 60,000 | |
| | | ງ2.44 | ໝາກພິລາ 5 ປີ ລົງມາ | ຕົ້ນ | 48,000 | |
| | | ງ2.45 | ໝາກຈຽງ 5 ປີ ລົງມາ | ຕົ້ນ | 42,000 | |
| | | ງ2.46 | ໝາກກອກ 5 ປີ ຂຶ້ນໄປ | ຕົ້ນ | 120,000 | |
| | | ງ2.47 | ໝາກວ່າ 5 ປີ ລົງມາ | ຕົ້ນ | 60,000 | |
| | | ງ2.48 | ໝາກລິ້ນໄມ້ 5 ປີ ຂຶ້ນໄປ | ຕົ້ນ | 72,000 | |
| | | ງ2.49 | ໝາກມອນ 5 ປີ ລົງມາ | ຕົ້ນ | 84,000 | |
| | | ງ2.50 | ໝາກໄຟ 5 ປີ ລົງມາ | ຕົ້ນ | 42,000 | |
| | | ງ2.51 | ໝາກງິ້ວ 5 ປີ ລົງມາ | ຕົ້ນ | 72,000 | |
| | | ງ2.52 | ໝາກຄ້ຽວ 5 ປີ ລົງມາ | ຕົ້ນ | 60,000 | |
| | ງ3 | ເຄື່ອງພືນລະປູກ | | | | |
| | | ງ3.1 | ກ້ວຍ | ສຸມ | 72,000 | |
| | | ງ3.2 | ອ້ອຍ | ສຸມ | 42,000 | |
| | | ງ3.3 | ໝາກແໜ່ງ 1-5 ປີ | ສຸມ | 12,000 | |
| | | ງ3.4 | ໝາກນັດ | ຕົ້ນ | 18,000 | |
| | | ງ3.5 | ເຜືອກມັນ, ພືດຜັກ ແລະ ອື່ນໆ | ສຸມ | 6,000 | |
| | ງ4 | ໄມ້ປ່ອງ | | | | |
| | | ງ4.1 | ໄມ້ຊາງໄຜ່ | ສຸມ | 96,000 | |
| | | ງ4.2 | ໄມ້ໄຜ່ບ້ານ | ສຸມ | 120,000 | |
| | | ງ4.3 | ໄມ້ຫົກຫວານ | ສຸມ | 96,000 | |
| | | ງ4.4 | ໄມ້ເຮັຍ | ສຸມ | 60,000 | |
| | | ງ4.5 | ໄມ້ໄຜ່ຫວານ-ບົງຫວານ | ສຸມ | 96,000 | |
| | ງ5 | ຕົ້ນໄມ້ປະດັບ | | | | |
| | | ງ5.1 | ຝາງແດງ | ຕົ້ນ | 42,000 | |
| | | ງ5.2 | ດອກຄູນ | ຕົ້ນ | 36,000 | |
| | | ງ5.3 | ຕົ້ນສົນ | ຕົ້ນ | 60,000 | |

| | | | | | | |
|---|---|---|---|---|---|---|
| | | ງ5.4 | ອາດສະໜາ | ຕົ້ນ | 36,000 | |
| | | ງ5.5 | ຕົ້ນຖຸນອິນເດຍ | ຕົ້ນ | 36,000 | |
| | | ງ5.6 | ຕົ້ນໄຂ | ຕົ້ນ | 42,000 | |

**ມາດຕາ 13 ແຫຼ່ງທຶນຊໍາລະ**

ງົບປະມານໃນການຊໍາລະ ແມ່ນນໍາໃຊ້ງົບປະມານ ໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນໍ້າຖ້ວມ ເທດສະບານເມືອງໄຊ ຕາມຄວາມຮັບຜິດຊອບ ແລະ ການຕົກລົງຂອງລັດຖະບານ;

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 14 ຫ້າມສໍາລັບບຸກຄົນ ແລະ ນິຕິບຸກຄົນທົ່ວໄປ**

1. ຫ້າມບຸກລຸກເຂົ້າໄປຕັ້ງຖິ່ນຖານສ້າງເຮືອນທີ່ຢູ່ອາໄສ, ສິ່ງປຸກສ້າງຕ່າງໆ, ຈັບຈອງທີ່ດິນທີ່ຢູ່ໃນເຂດກໍ່ສ້າງ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງຢ່າງເດັດຂາດ;
2. ຍົກຍ້າຍ, ປ່ຽນແປງ ຫຼື ທໍາລາຍເຂດຫຼັກໝາຍຂອບເຂດສະຫງວນ ຂອງໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນໍ້າຖ້ວມ ເທດສະບານເມືອງໄຊ;
3. ນໍາເຂົ້າແຮງງານ, ພາຫະນະເຄື່ອງຈັກ ແລະ ອຸປະກອນກໍ່ສ້າງຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ;
4. ຈັບຈອງທີ່ດິນ, ສໍາຫຼວດ, ຂຸດຄົ້ນແຮ່ຫີນ-ຊາຍ ແລະ ດໍາເນີນທຸລະກິດຕ່າງໆໂດຍບໍ່ຖືກຕ້ອງຕາມກົດໝາຍ ຫຼື ບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 15 ຫ້າມສໍາລັບຜູ້ທີ່ຖືກຜົນກະທົບ**

1. ຂັດຂວາງການປະຕິບັດໜ້າທີ່ຂອງຄະນະຮັບຜິດຊອບ, ຄະນະກໍາມະການໄກ່ເກ່ຍຜົນກະທົບ ແລະ ພາກສ່ວນທີ່ກ່ຽວຂ້ອງ;
2. ໃຫ້ສິນບົນ, ຄ່າຈ້າງ, ສົມຮູ້ຮ່ວມຄິດກັບຄະນະຮັບຜິດຊອບ, ພະນັກງານອື່ນໆທີ່ກ່ຽວຂ້ອງ;
3. ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່, ຂັດຂວາງ, ໝິ່ນປະມາດ ແລະ ທໍາລາຍຫຼັກຖານຂໍ້ມູນຕ່າງໆ;
4. ທວງເອົາ ຫຼື ຮຽກຮ້ອງຄ່າຕອບແທນເກີນຄວາມເປັນຈິງ ໃນກໍລະນີທີ່ລັດໄດ້ທົດແທນໃຫ້;
5. ເມື່ອໄດ້ຮັບຄ່າຊົດເຊີຍແລ້ວ ຫ້າມບໍ່ໃຫ້ມີການ ສ້າງຂໍ້ມູນໃໝ່ເພື່ອຮຽກຮ້ອງຄ່າຊົດເຊີຍຕື່ມ ຫຼື ໃສ່ຮ້າຍປ້າຍເປື້ອນຄວາມເປັນຈິງ ໃນການປະຕິບັດໜ້າທີ່ຂອງພະນັກງານພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 16 ຂໍ້ຫ້າມສໍາລັບຄະນະກໍາມະການໄກ່ເກ່ຍຈັດສັນຍົກຍ້າຍ**

1. ເມີນເສີຍ, ປະລະໜ້າທີ່ ແລະ ຄວາມຮັບຜິດຊອບທີ່ການຈັດຕັ້ງໄດ້ມອບໝາຍໃຫ້;
2. ບໍ່ໃຫ້ຊຸກຍູ້ ຫຼື ໃຫ້ຄວາມຫວັງຕໍ່ປະຊາຊົນເກີນລະບຽບການ ຫຼື ກົດໝາຍທີ່ໄດ້ກໍານົດ;
3. ສວຍໃຊ້ສິດ, ໜ້າທີ່, ອໍານາດເກີນຂອບເຂດ, ປົດບັງ, ເຊື່ອງອໍາ, ຖ່ວງດຶງ, ປອມແປງເອກະສານເຊັ່ນ: ປອມແປງລາຍເຊັນ, ໃບຮັບ-ຈ່າຍເງິນ, ຕາປະທັບ ແລະ ການສໍາຫຼວດຂໍ້ມູນອື່ນໆ ທີ່ບໍ່ຖືກຕ້ອງຕາມຄວາມຈິງ;
4. ຮັບເອົາ, ທວງເອົາ, ຕົກລົງຮັບເອົາ ຫຼື ໃຫ້ສິນບົນເພື່ອຜົນປະໂຫຍດສ່ວນຕົວ ຫຼື ຜົນປະໂຫຍດໝູ່ຄະນະ;
5. ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່ ແລະ ນໍາໃຊ້ມາດຕະການອື່ນໆ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
6. ເປີດເຜີຍຂໍ້ມູນລັບອັນສ້າງຜົນເສຍຫາຍ ຕໍ່ກັບໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນໍ້າຖ້ວມ ເທດສະບານເມືອງໄຊ.

## ໝວດທີ 5
## ອົງການຄຸ້ມຄອງ ທຶນໜ່ວຍລາຄາ ທົດແທນຄ່າເສຍຫາຍ

**ມາດຕາ 17 ອົງການຄຸ້ມຄອງ ທຶນໜ່ວຍລາຄາ ທົດແທນຄ່າເສຍຫາຍ**

1. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ;
2. ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ;
3. ອົງການປົກຄອງບ້ານທີ່ກ່ຽວຂ້ອງ.

**ມາດຕາ 18 ສິດ ແລະ ໜ້າທີ່ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ**

ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ ມີສິດ ແລະ ໜ້າທີ່ ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ເປັນຜູ້ຮັບຜິດຊອບໂດຍກົງ ໃນການນຳພາຈັດຕັ້ງປະຕິບັດ ທຶນໜ່ວຍລາຄາທົດແທນຄ່າເສຍຫາຍ, ໂຄສະນາເຜີຍແຜ່, ເຊື່ອມຊຶມ, ຕິດຕາມ, ກວດກາ ແລະ ມອບໃຫ້ຫ້ອງການຈັດຕັ້ງປະຕິບັດໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນໍ້າຖ້ວມ ເທດສະບານເມືອງໄຊ ປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ**

ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ ມີສິດ ແລະ ໜ້າທີ່ ໃນການ ຊຸກຍູ້ຕິດຕາມກວດກາ, ປຶກສາຫາລື, ປະສານລາຍງານຂັ້ນເທິງເປັນປົກກະຕິ ແລະ ປະຕິບັດສິດອື່ນໆ ຕາມການມອບໝາຍຂອງພະແນກ ຍທຂ ແຂວງ.

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານທີ່ກ່ຽວຂ້ອງ**

1. ໂຄສະນາເຜີຍແຜ່ ແນວທາງນະໂຍບາຍຂອງພັກ ກ່ຽວກັບ ການປຸກລະດົມທຸກພາກສ່ວນ ແລະ ປະຊາຊົນຊັ້ນຄົນຕ່າງໆ ພາຍໃນບ້ານ ຕັ້ງໜ້າປະກອບສ່ວນເຂົ້າຮ່ວມໃນການພັດທະນາຕົວເມືອງໄຊ ໃຫ້ຈະເລີນກ້າວໜ້າໂດຍໄວ;
2. ຢັ້ງຢືນຄວາມຖືກຕ້ອງຂໍ້ມູນຊັບສິນຂອງຜູ້ໄດ້ຮັບຜົນກະທົບ;
3. ເປັນຕົວແທນໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບ ແລະ ປະກອບຄຳຄິດເຫັນໃນການຄັດເລືອກເອົາ ທຶນໜ່ວຍລາຄາທົດແທນຄ່າເສຍຫາຍທີ່ເໝາະສົມ;
4. ປະຕິບັດວຽກງານອື່ນໆ ກ່ຽວຂ້ອງກັບ ວຽກງານທຶນໜ່ວຍລາຄາທົດແທນຄ່າເສຍຫາຍ ຕາມການມອບໝາຍ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ແລະ ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ.

## ໝວດທີ 6
## ອົງການຕິດຕາມກວດກາພາຍໃນ ແລະ ພາຍນອກ

**ມາດຕາ 21 ອົງການຕິດຕາມກວດກາພາຍໃນ**

ອົງການກວດກາພາຍໃນປະກອບມີ:

1. ຂະແໜງການກວດກາຂອງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງອຸດົມໄຊ;
2. ໜ່ວຍງານການກວດກາ ຂອງຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງໄຊ;
3. ອົງການປົກຄອງບ້ານ.

**ມາດຕາ 22 ອົງການຕິດຕາມກວດກາພາຍນອກ**

ອົງການກວດກາພາຍນອກປະກອບມີ:

1. ສະພາປະຊາຊົນຂັ້ນແຂວງ;
2. ອົງການກວດກາລັດ ແຂວງ;
3. ພະແນກການເງິນ ແຂວງ;
4. ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 23 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆຕາມລະບຽບການ.

**ມາດຕາ 24 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໄດ້ລະເມີດຂໍ້ຕົກລົງສະບັບນີ້ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໄໝ, ໃຊ້ແທນທາງແພ່ງ ຫຼື ຖືກລົງໂທດທາງອາຍາຕາມກໍລະນີໜັກ ຫຼື ເບົາຢ່າງທັນການ.

## ໝວດທີ 8

## ບົດບັນຍັດສຸດທ້າຍ

**ມາດຕາ 25 ການຈັດຕັ້ງປະຕິບັດ**

ພາຍຫຼັງ ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ ບັນດາພາກສ່ວນຕ່າງໆ ແລະ ບຸກຄົນທີ່ຖືກແຕ່ງຕັ້ງ, ຮັບມອບໝາຍຈະຕ້ອງຮີບຮ້ອນເກັບກຳຂໍ້ມູນໃຫ້ລະອຽດຮອບດ້ານ, ໂຄສະນາເຜີຍແຜ່ປະຊາສຳພັນໃຫ້ຜູ້ຖືກຜົນກະທົບກະກຽມຍົກຍ້າຍ, ຮັບເອົາຄ່າທົດແທນ ແລະ ແກ້ໄຂຂໍ້ຂັດແຍ່ງ (ຖ້າມີ) ເພື່ອບໍ່ໃຫ້ມີຜົນກະທົບເຖິງການກໍ່ສ້າງໂຄງການ , ອຳນວຍຄວາມສະດວກ ໃຫ້ຜູ້ຮັບເໝົາກໍ່ສ້າງໂຄງການ ປະຕິບັດໜ້າທີ່ຢ່າງສະດວກ ພາຍຫຼັງສຳເລັດ ວຽກງານທົດແທນແລ້ວ ຄະນະຮັບຜິດຊອບຕ້ອງໄດ້ສະຫຼຸບ, ລາຍງານ ມອບວຽກຄຸ້ມຄອງບໍລິຫານເຂດສະຫງວນໃຫ້ໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນ້ຳຖ້ວມ ເທດສະບານເມືອງໄຊ ຄຸ້ມຄອງບໍລິຫານຕໍ່ໄປ;

ມອບໃຫ້ຄະນະຊີ້ນຳຂັ້ນແຂວງ, ຂັ້ນເມືອງ, ອະນຸກຳມະການ ແລະ ຜູ້ພັດທະນາໂຄງການປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ເປັນຜູ້ຮັບຜິດຊອບຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ໃຫ້ປະກົດຜົນເປັນຈິງ;

ພະແນກການ, ກົມ, ກອງ, ຫ້ອງການ, ອົງການຈັດຕັ້ງຕ່າງໆ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 26 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ເຈົ້າແຂວງອຸດົມໄຊ

ບອ ຄຳພັນ ເຜີຍຍະວົງ